ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສະພາບໍລິຫານ ທຫລ ຈັດກອງປະຊຸມຄັ້ງທີ I ປະຈຳປີ 2022



ກອງປະຊຸມສະພາບໍລິຫານ ທຫລ ຄັ້ງທີ I ປະຈຳປີ 2022 ໄດ້ຈັດຂຶ້ນເປັນເວລາເຄິ່ງວັນ ໃນຕອນເຊົ້າຂອງວັນທີ 17 ພຶດສະພາ 2022 ທີ່ຫ້ອງປະຊຸມໃຫ່ຍຊັ້ນ VI ທະນາຄານແຫ່ງ ສປປ ລາວ ພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສິດພະໄຊ ຜູ້ວ່າການ ທຫລ, ປະທານສະພາບໍລິຫານ ທຫລ, ເຊິ່ງມີຄະນະຜູ້ວ່າການ, ຄະນະສະພາບໍລິຫານ ທຫລ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້, ໂດຍປະຕິບັດຕາມລະບອບການປະຊຸມຂອງສະພາບໍລິຫານທະນາຄານແຫ່ງ ສປປ ລາວ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ), ເພື່ອສະຫຼຸບຕີລາຄາໝາກຜົນແຫ່ງການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ໄລຍະຜ່ານມາ ແລະ ກຳນົດທິດທາງໃນການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ແລະ ສະຫຼຸບການຈັດຕັ້ງປະຕິບັດວຽກງານໄລຍະ 3 ເດືອນຕົ້ນປີ ແລະ ທິດທາງແຜນການປີ 2022. ພ້ອມນີ້, ກໍມີບາງບັນຫາວຽກງານທີ່ປິ່ນອ້ອມອື່ນໆຈຳນວນໜຶ່ງ ເພື່ອໃຫ້ສະພາບໍລິຫານພິຈາລະນາຮັບຮອງ. ກອງປະຊຸມໄດ້ຮັບຟັງການລາຍງານ ແລະ ຄົ້ນຄວ້າພິຈາລະນາປະກອບຄຳເຫັນໃສ່ເອກະສານທີ່ສຳຄັນ 4 ສະບັບ ຄື: 1) ການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຂອງ ທຫລ 3 ເດືອນຕົ້ນປີ ແລະ ທິດທາງແຜນການປີ 2022, 2) ການຈັດຕັ້ງປະຕິບັດແຜນເງິນຕາ 3 ເດືອນຕົ້ນປີ ແລະ ທິດທາງແຜນການປີ 2022, 3) ສະພາບພົ້ນເດັ່ນຂອງອັດຕາແລກປ່ຽນ, ອັດຕາເງິນເຟີ້ ແລະ ມາດຕະການແກ້ໄຂ ແລະ 4) ຊຸກຍູ້ການພັດທະນາລະບົບການຊຳລະງົບປະມານດີຈີຕອລແບບລວມສູນຜ່ານລະບົບທະນາຄານ. ຫຼັງຈາກນັ້ນ, ທີ່ປະຊຸມກໍ່ໄດ້ມີການຄົ້ນຄວ້າ ແລະ ປະກອບຄວາມຄິດເຫັນຢ່າງກົງໄປກົງມາ.




ທ່ານ ສອນໄຊ ສິດພະໄຊ ປະທານສະພາບໍລິຫານ ທຫລ ໄດ້ຕີລາຄາສູງຕໍ່ກອງປະຊຸມໃນຄັ້ງນີ້ ແລະ ໄດ້ຍ້ອງຍໍຊົມເຊີຍຕໍ່ການຍົກສູງຄວາມຮັບຜິດຊອບຂອງສະມາຊິກສະພາບໍລິຫານ ແລະ ຈະນໍາເອົາບັນດາຄໍາຄິດຄໍາເຫັນເຫຼົ່ານັ້ນໄປຄົ້ນຄວ້າ, ປັບປຸງ ແລະ ຈັດຕັ້ງປະຕິບັດເຂົ້າສູ່ວຽກງານຕົວຈິງໃຫ້ເລີກເຊິ່ງດີຂຶ້ນກວ່າເກົ່າ.

#ຂ່າວໂດຍ: ທ. ສົມພິດ ທໍາມະວົງ
#ພາບໂດຍ: ນ. ປາໃນ ພັນທະລາ

**ຢູ່ເມືອງລາວ ໃຊ້ເງິນກີບລາວ**